


# ຂະບວນການແຂ່ງຂັນກິລາ
# ເພື່ອຂໍ່ານັບຮັບຕ້ອນວັນສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ ຄົບຮອບ 54 ປີ




ໃນຕອນແລງ ເວລາ 16:00 ໂມງ ຂອງວັນທີ 04 ຕຸລາ 2022 ທີ່ເດີ່ນເຕະບານຫຍ້າທຽມວອນທະບົງ, ນະຄອນຫຼວງພະບາງ. ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອແຂວງຫຼວງພະບາງ ພ້ອມດ້ວຍທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຕັ້ງຢູ່ແຂວງຫຼວງພະບາງ ໄດ້ຮ່ວມກັນຈັດຂະບວນການກິລາ ເພື່ອເປັນການສ້າງຂະບວນການຂໍ່ານັບຮັບຕ້ອນວັນ ສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ (ທຫລ) ຄົບຮອບ 54 ປີ (ວັນທີ 07 ຕຸລາ 1968 – 07 ຕຸລາ 2022) ພາຍໃຕ້ການເປັນປະທານຂອງ

ທ່ານ ນ. ໂພທິຈັນ ທຳມະເທວາ ຫົວໜ້າສາຂາ ທຫລ.ຫຼບ, ເຊິ່ງມີຄະນະສາຂາ ທຫລ.ຫຼບ ພ້ອມດ້ວຍ ພະນັກງານທັງໝົດ ແລະ ຕົວແທນຈາກທະນາຄານທຸລະກິດ ແລະ ສະຖາບັນການເງິນ ພາຍໃນແຂວງ ຫຼວງພະບາງ ເຂົ້າຮ່ວມ.

ໃນການຈັດການແຂ່ງຂັນກິລາໃນຄັ້ງນີ້ລວມມີກິລາບານເຕະຊາຍ, ກິລາບານເຕະຍິງ ແລະ ກິລາ ມວນຊົນ 02 ປະເພດ (ກິລາຢຽບໝາກປູມເປົ້າ ແລະ ຟ້ອນລຳວົງອ້ອມຕົ່ງ). ຜົນການແຂ່ງຂັນບານເຕະຊາຍ ລະຫວ່າງ ທີມນັກກິລາບານເຕະ ທຫລ.ຫຼບ ພົບກັບ ທີມນັກກິລາປະສົມທະນາຄານທຸລະກິດ ແລະ ສະຖາບັນການເງິນ ແຂວງຫຼວງພະບາງ ຜົນການແຂ່ງຂັນແມ່ນ ທຫລ.ຫຼບ ຊະນະ, ກິລາບານເຕະຍິງ ລະຫວ່າງ ທີມນັກກິລາບານເຕະ ທຫລ.ຫຼບ ພົບກັບ ທີມນັກກິລາປະສົມທະນາຄານທຸລະກິດ ແລະ ສະຖາບັນການເງິນ ແຂວງຫຼວງພະບາງ ຜົນການແຂ່ງຂັນແມ່ນ ທຫລ.ຫຼບ ຊະນະ, ປະເພດກິລາມວນຊົນ: ກິລາຢຽບໝາກປູມເປົ້າ ແລະ ຟ້ອນລຳວົງອ້ອມຕົ່ງ ໂດຍໃຫ້ແຕ່ລະທະນາຄານ ແລະ ສະຖາບັນການເງິນ ສົ່ງຕົວແທນເຂົ້າຮ່ວມແຂ່ງຂັນ ປະເພດລະ 01 ທ່ານ, ຜົນການແຂ່ງຂັນກິລາຢຽບໝາກປູມເປົ້າ ຊະນະເລີດ ແມ່ນຕົວແທນມາຈາກທະນາຄານລາວ-ຝຣັ່ງ ໜ່ວຍບໍລິການຫຼວງພະບາງ, ຮອງຊະນະເລີດແມ່ນຕົວແທນ ຈາກທະນາຄານທະນາຄານເອຊີລີດລາວຈຳກັດ ສາຂາຫຼວງພະບາງ, ຜົນການແຂ່ງຂັນຟ້ອນລຳວົງອ້ອມຕົ່ງ ຊະນະເລີດແມ່ນຕົວແທນຈາກ ທະນາຄານສົ່ງເສີມກະສິກຳ ສາຂາຫຼວງພະບາງ, ຮອງຊະນະເລີດແມ່ນຕົວແທນຈາກ ທຫລ.ຫຼບ. ໃນໂອກາດນີ້ ທ່ານ ນາງ ໂພທິຈັນ ທຳມະເທວາ ຫົວໜ້າ ທຫລ.ຫຼບ ກໍໄດ້ສະແດງ ຄວາມຍ້ອງຍໍຊົມເຊີຍຕໍ່ຜົນການແຂ່ງຂັນກິລາ ພ້ອມທັງສະແດງຄວາມຂອບໃຈ ບັນດາແຂກຜູ້ເຂົ້າຮ່ວມ ທີ່ ໄດ້ປະກອບສ່ວນເຮັດໃຫ້ງານດັ່ງກ່າວສຳເລັດຜົນຕາມລະດັບຄາດໝາຍ.

**ຂ່າວ: ບົວອອນ ວົງສະຫວ່າງ**

**ພາບ: ສຸດທິສັກ ຫວັງສະຫວັດ**








ຮັກບ້ານເກີດເມືອງນອນ ໃຊ້ຈ່າຍທອນເປັນເງິນກີບ